# ລາຍການກວດເບິ່ງຂອງການຢັ້ງຢືນອອກໃບປະກາດຜູ້ຊ່ວຍເບິ່ງແຍງດູແລຢູ່ເຮືອນທີ່ຖືກຢັ້ງຢືນ

**ກົດກຳນົດພາຍໃຕ້ກົດຫມາຍ:**

ທ່ານຕ້ອງສຳເຣັດການຝຶກຝົນ **75** ຊົ່ວໂມງ (ລວມທັງ **5** ຊົ່ວໂມງຂອງການຮຽນຮູ້ ແລະ ຄວາມປອດພັຍ) ພາຍໃນ **120** ວັນຂອງວັນທີ່ຖືກຈ້າງເຣັດວຽກຂອງທ່ານ ແລະ ກາຍເປັນຜູ້ຊ່ວຍເບິ່ງແຍງດູແລຢູ່ເຮືອນທີ່ໄດ້ໃບປະກາດພາຍໃນ **200** ວັນຂອງການຈ້າງເຣັດວຽກ. ຖ້າຫາກວ່າທ່ານບໍ່ສອດຄ່ອງນຳວັນກຳນົດເວລາເຫລົ່ານີ້ທ່ານບໍ່ສາມາດດຳເນີນທີ່ຈະຖືກຈ່າຍເງິນໃຫ້ໄດ້. **ຈົ່ງໃຊ້ວັນກຳນົດເວລາ ແລະ ລາຍການ ທີ່ຖືກແນະນຳບອກ ຕໍ່ລົງໄປນີ້ແລະ ລາຍການເພື່ອໂອກາດດີທີ່ສຸດທີ່ຈະສອດຄ່ອງນຳວັນກຳນົດເວລາເຫລົ່ານີ້.**

| |
|---|
| ຂຽນປະກອບນຳນາຍຈ້າງຂອງທ່ານເພື່ອຈະກາຍເປັນຜູ້ຊ່ວຍເບິ່ງແຍງດູແລຢູ່ເຮືອນ |

ໃຊ້ <u>ຊື່ດຽວກັນ</u> ໃສ່ໃນຟອມທຸກໆໃບ.
ຕົວຢ່າງ: ໃຊ້ຊື່ນຶ່ງ; **Jonathan, John ຫລື Johnny**

- ☐ ສຳເຣັດການກວດເບິ່ງເບື້ອງຫລັງເບິ່ງຊື່ ແລະ ວັນເກີດໂດຍຜ່ານນາຍຈ້າງຂອງທ່ານ. ເລກຂອງຫ້ອງການເລີ້ມຕົ້ນເຣັດສຳນວນເອກສານຂື້ນມາ (OCA#) ໄດ້ຖືກເຣັດອອກມາຈາກການກວດເບິ່ງເບື້ອງຫລັງອັນນີ້. ຂຽນເລກ OCA# ລົງບ່ອນນີ້. ______________________
- ☐ ຂຽນປະກອບໃບຟອມຫມາຍນັດພິມລາຍມື ແລະ ເຣັດຫມາຍນັດພິມລາຍມື. ເລກ OCA # ຈະຖືກຂຽນໃສ່ຟອມໃບນີ້.
- ☐ ເວລາຫມາຍນັດການພິມລາຍມື: ______________________
- ☐ <u>ກ່ອນທີ່ທ່ານຈະໃຫ້ການເບິ່ງແຍງດູແລ:</u> ເບິ່ງສຳເຣັດການຮຽນຮູ້ (2 ຊົ່ວໂມງ) ແລະ ຄວາມປອດພັຍ (3 ຊົ່ວໂມງ) . ທ່ານຈະຕ້ອງການໃບປະກາດສຳເຣັດການຝຶກຝົນສຳລັບຫ້ອງຮຽນເຫລົ່ານີ້.ໃບປະກາດເຫລົ່ານີ້ຈະກາຍເປັນພາກສ່ວນນຶ່ງຂອງກົດກຳນົດການຝຶກຝົນພື້ນຖານ 75 ຊົ່ວໂມງຂອງທ່ານ. ຢູ່ດ້ານຫລັງຂອງໃບປິວອັນນີ້, ຈົ່ງເບິ່ງພາຍໃຕ້ການຝຶກຝົນເພື່ອຈະຊອກຫານາຍຄູຜູ້ທີ່ຖືກອະນຸຍາດ. ***120 ວັນທີ່ຈະສຳເຣັດການຝຶກຝົນພື້ນຖານ*** *ເລີ້ມຕົ້ນຈາກວັນທີຂອງການຈ້າງເຣັດວຽກຂອງທ່ານ.*

## ຂັ້ນທີ 1: ທ່ານຈົດຊື່ລົງທະບຽນສຳລັບການຝຶກຝົນ

- ☐ <u>ແນະນຳໃຫ້ທ່ານເຣັດອັນນີ້ກ່ອນ 14 ວັນຈາກການຈ້າງເຣັດວຽກ:</u> ຈົດຊື່ລົງທະບຽນສຳລັບການຝຶກຝົນພື້ນຖານ.
- ☐ <u>ແນະນຳໃຫ້ທ່ານເຣັດໃຫ້ແລ້ວກ່ອນ 60 ວັນຂອງການຈ້າງເຣັດວຽກ:</u> ສຳເຣັດການຝຶກຝົນຂອງທ່ານໂດຍໄວທີ່ສຸດເທົ່າທີ່ຈະໄວໄດ້ເພື່ອຈະຮັບປະກັນວ່າທ່ານຈະໄດ້ຫ້ອງຮຽນຢູ່ໃນເຂດທີ່ທ່ານອາສັຍຢູ່ ແລະ ທັນກັບເວລາເພື່ອຈະສອດຄ່ອງນຳວັນກຳນົດເວລາຂອງການສອບເສັງ ແລະ ການຢັ້ງຢືນອອກໃບອະນຸຍາດໃຫ້. ຢູ່ທາງຫລັງຂອງໃບປິວອັນນີ້, ຈົ່ງເບິ່ງພາຍໃຕ້ການຝຶກຝົນເພື່ອຈະຊອກຫານາຍຄູຜູ້ທີ່ຖືກອະນຸຍາດ.
- ☐ ທ່ານຈະໄດ້ຮັບໃບປະກາດຄວາມສຳເຣັດ 75 ຊົ່ວໂມງ (ໃບປະປາດການຝຶກຝົນຂອງກົມ DSHS) ຈາກນາຍຄູຜູ້ທີ່ຖືກອະນຸຍາດຂອງກົມ DSHS ຜູ້ທີ່ສອນຊົ່ວໂມງສຸດທ້າຍຂອງການຝຶກຝົນພື້ນຖານ 75 ຊົ່ວໂມງຂອງທ່ານ. ສະແດງໃບປະກາດທຸກໆໃບໃຫ້ນາຍຄູຄົນນີ້ເບິ່ງ.
- ☐ ເມື່ອໃດທ່ານສຳເຣັດການຝຶກຝົນທີ່ຕ້ອງເຣັດແລ້ວຂອງທ່ານຈະມີເງື່ອນໄຂທີ່ຈະເອົາການສອບເສັງເປັນຜູ້ຊ່ວຍເບິ່ງແຍງດູແລຢູ່ເຮືອນ.

## ຂັ້ນທີ 2: ທ່ານຈະສົ່ງໃບຄຳຮ້ອງຂອງກົມອະນາມັຍ (DOH)

- ☐ <u>ເຣັດໃຫ້ແລ້ວກ່ອນ 14 ວັນຈາກການຈ້າງເຣັດວຽກ:</u> ສະມັກຂໍເອົານຳ DOH ການຢັ້ງຢືນການອອກການອະນຸຍາດຜູ້ຊ່ວຍເບິ່ງແຍງດູແລຢູ່ເຮືອນແລະເອົາການສອບເສັງຂີດຂຽນແລະຄວາມຊຳນານຜ່ານບໍຣິສັດສອບເສັງ, Prometric. ສົ່ງ <u>ຄຳຮ້ອງ</u> [*HCA Certification Application*] . ຢ່າສູ່ຈ່າຍຄ່າທຳນຽມ,ຫມາຍໃສ່ວ່າເຣັດຈະຈ່າຍແລະຄ່າທຳນຽມຈະຖືກຈ່າຍໂດຍຜ່ານ SEIU NW Training Partnership. ສິ່ງທີ່ຖືກຄັດມານຳຄຳຮ້ອງ DOH ຂອງທ່ານແມ່ນຣາຍລະອຽດທີ່ຖືກເອົາໃຫ້ບໍຣິສັດສອບເສັງ, Prometric, ຊຶ່ງຈະອະນຸຍາດໃຫ້ທ່ານທຳການສອບເສັງຂີດຂຽນ ແລະ ຄວາມຊຳນານ. <u>Prometric ຈະບໍ່ເຣັດຫມາຍນັດໃຫ້ທ່ານສຳລັບການສອບເສັງທີ່ບໍ່ມີທີ່ຢູ່ອີເມລ.</u>
- ☐ ເລກ OCA # ຈາກໃບຟອມຫມາຍນັດພິບການພິມລາຍມືຕ້ອງມີຢູ່ໃນຄຳຮ້ອງຂອງ DOH.
- ☐ *ສົ່ງຄ່າທຳນຽມມາທາງໄປສະນີຫາ DOH ສຳລັບຄ່າທຳນຽມຂອງຄຳຮ້ອງຂອງ DOH ແລະຄ່າທຳນຽມການສອບເສັງ Prometric,ໂດຍທາງເຊັກເງິນ ຫລື ມັນນີອໍເດີມານຳຄຳຮ້ອງຂອງທ່ານ.*
- ☐ ທ່ານຕ້ອງສຳເຣັດການຝຶກຝົນ 75 ຊົ່ວໂມງ ກ່ອນທີ່ທ່ານຈະຖືກເຣັດຫມາຍນັດເພື່ອຈະທຳການສອບເສັງຂີດຂຽນ ແລະ ຄວາມຊຳນານໂດຍຜ່ານ Prometric. ຜ່ານການສອບເສັງຂີດຂຽນ ແລະ ຄວາມຊຳນານ: ຂຽນວັນທີ ແລະ ສະຖານທີ່ຂອງການສອບເສັງໃສ່ບ່ອນນີ້: ______________________
- ☐ ຖ້າຫາກວ່າທ່ານຮູ້ຈັກພາສາອັງກິດຈຳກັດ, LEP (ອັນນີ້ຫມາຍຄວາມວ່າຄວາມສາມາດຂອງທ່ານທີ່ຈະອ່ານ, ຂຽນ ຫລື ເວົ້າພາສາອັງກິດແມ່ນຈຳກັດ) ທ່ານອາດຈະມີເງື່ອນໄຂໄດ້ຮັບການຢັ້ງຢືນອອກໃບປະກາດຊົ່ວຄາວ 60 ວັນເພີ້ມເຕີມອີກ.

⇒ ເພື່ອຈະເອົາການສອບເສັງ HCA ເປັນພາສາສະແປນິຊ, ຣັດເຊັຽ, ວຽດນາມ, ເກົາຫລີ, ຈີນ, ຂະເມັນ, ລາວ, ຊາມວນ, ຢູເຄຣນຽນ, ຕາກາລອກ ຫລື ອາຣາບິກ, ໃຫ້ຫມາຍໃສ່ພາສາທີ່ຕ້ອງການໃສ່ໃບຄຳຮ້ອງສອບເສັງຂອງ HCA.

⇒ ຖ້າຫາກວ່າທ່ານຕ້ອງການທຳການສອບເສັງໃນພາສາອື່ນທີ່ບໍ່ຖືກບົ່ງຢູ່ຂ້າງເທິງນີ້, ທ່ານຈະຂໍຮ້ອງເອົານາຍແປພາສາສ່ວນບຸກຄົນໃນພາສາຂອງທ່ານເອງໄດ້ໂດຍການຂຽນປະກອບຊຸດຄຳຮ້ອງຂໍເອົາການອຳນວຍຄວາມສະດວກໃນການສອບເສັງຢູ່ໃນແວບໄຊທຂອງ Prometric (Prometric live link ) ແລະ ຍື່ນໄປຫາທີ່ຢູ່ທາງຫລັງຂອງຟອມໃບນີ້.

- ☐ ຖ້າຫາກວ່າທ່ານບໍ່ມາຕາມເວລາສອບເສັງທີ່ຖືກຂຽນບອກຢູ່ຂ້າງເທິງນີ້; ເຣັດຫມາຍນັດການສອບເສັງຂອງທ່ານໃຫມ່ໂດຍທັນທີໂລດ.
- ☐ ຖ້າຫາກວ່າທ່ານສອບຕົກການສອບເສັງ, ສະມັກຂໍໃຫມ່ໂດຍທັນທີໂລດນຳ Prometric ເພື່ອຈະເສັງໃຫມ່. ທ່ານສາມາດສອບພາກສ່ວນຂອງການສອບທີ່ທ່ານຕົກໃຫມ່ໄດ້ສອງເທື່ອ. ທ່ານຕ້ອງໄດ້ຈ່າຍຄ່າທຳນຽມຂອງການສອບໃຫມ່ແຕ່ລະເທື່ອ.
- ☐ *ທ່ານໄດ້ຖືກແຕ່ງຕັ້ງເລກ 10 ຕົວຮັບຮອງຂອງກົມ DOH (ເລີ້ມຕົ້ນດ້ວຍຕົວ HM ) .ຊອກຫາເລກຮັບຮອງຂອງກົມ DOH ຂອງທ່ານຢູ່ໃນແວບໄຊທຂອງກົມ DOH ໂດຍການພິມໃສ່ "[Provider Credential Search]",*

ຈົ່ງເບິ່ງທາງຫລັງຂອງໃບປິວສຳລັບແວບໄຊທ, ທີ່ຢູ່ໄປສະນີ, ແລະ ຣາຍລະອຽດການຕິດຕໍ່ ແລະ ເຄັດລັບທີ່ຊ່ວຍໄດ້ຫລາຍ →

## ໃຫ້ໂອກາດທີ່ດີທີ່ສຸດໃຫ້ທ່ານເອງ ເພື່ອຈະເຮັດໃຫ້ທັນວັນກຳນົດເວລາທີ່ຕ້ອງເຮັດ!

*ແນະນຳ* ↓

14 ວັນ → 30 ວັນ → 60 ວັນ → 65 ວັນ →

*ວັນກຳນົດເວລາທີ່ຕ້ອງເຮັດ*
120 ວັນສຳລັບການຝຶກຝົນ

| 14 ວັນ | 30 ວັນ | 60 ວັນ | 65 ວັນ | 120 ວັນ |
|---|---|---|---|---|
| 200 & 260 ການອອກໃບປະກາດ<br>ຈົດຊື່ສຳລັບການຝຶກຝົນ<br>ສະມັກນຳ DOH<br>(DOH 14 ວັນທີ່ຕ້ອງເຮັດ) | ສະມັກນຳ Prometric | ສຳເຮັດການຝຶກຝົນ | ທຳການສອບເສັງ | ໃຫ້ມີເວລາພໍເພື່ອຈະສຳເຣັດການຝຶກຝົນກ່ອນ 120 ວັນ ແລະ ການຢັ້ງຢືນອອກໃບປະກາດກ່ອນ 200 ວັນ ຫລື ການຢັ້ງຢືນອອກໃບປະກາດ ຊົ່ວຄາວກ່ອນ 260 ວັນ. |

♦ ເລີ້ມຕົ້ນຕັ້ງແຕ່ວັນທີ **7/28/2013** ວັນກຳນົດເວລາເພື່ອຈະທຳການສອບເສັງໃຫ້ແລ້ວ ແລະ ການຢັ້ງຢືນອອກໃບປະກາດໃນຖານະເປັນ **HCA** ຈະຖືກຕໍ່ອອກໄປຮອດ **200** ວັນຂອງການຈ້າງເຮັດວຽກ.

## ຖ້າຫາກວ່າທ່ານບໍ່ສອດຄ່ອງນຳວັນກຳນົດເວລາຂອງການຝຶກຝົນ ແລະ ການຢັ້ງຢືນອອກໃບປະກາດ

- ທ່ານ **ບໍ່ສາມາດ** ຖືກຈ່າຍເງິນໃຫ້ເພື່ອຈະໃຫ້ການເບິ່ງແຍງດູແລ.

### ລາຍລະອຽດການຕິດຕໍ່ຫາກ່ຽວກັບການອອກເລກຮັບຮອງ **HCA**

| ແມ່ນໃຜ | ໂທຣະສັບ ແລະ ແຟກຊ | ທີ່ຢູ່ໄປສະນີ | ອີແມລ |
|---|---|---|---|
| **DOH** | ຜູ້ປະສານງານການອອກເລກຮັບຮອງ **HCA**<br>(360) 236-2700<br><br>ພະແນກປະຊາຊົນພັນຂອງ **DOH**<br>(360) 236-4700 | ສົ່ງໃບຄຳຮ້ອງພ້ອມທັງຄ່າທຳນຽມໄປທີ່:<br>DOH<br>Home Care Aide Credentialing<br>P.O. Box **1099**<br>Olympia, WA 98507<br>ສົ່ງເອກສານອື່ນໆ ທີ່ບໍ່ຖືກ ສົ່ງໄປນຳຄຳຮ້ອງທຳອິດໄປທີ່:<br>DOH<br>Home Care Aide Credentialing<br>P.O. Box **47877**<br>Olympia, WA 98504 | Homecareaides@doh.wa.gov |
| **Prometric** | ໂທຣະສັບ<br>1-800-324-4689<br><br>ຈົ່ງດາວໂຫລດປື້ມຄູ່ມືລາຍລະອຽດເພື່ອຈະຊ່ວຍຕອບຄຳຖາມຂອງທ່ານ.ຄຳແນະນຳທົ່ວໄປແມ່ນໃນ 13 ພາສາ. | **Prometric**<br>Attention: Washington Home Care Aide Program<br>7941 Corporate Dr.<br>Nottingham, MD 21236 | ແວບໄຊທ<br>WAHCA@prometric.com<br><br>ແວບໄຊທຂອງ Prometric:<br>WACA@prometric.com |

## HCA Quick Links

ຊອກຫາເຄືອຄ່າຍເຫລົ່ານີ້ຢູ່ໃນສະຖານທີ່ບ່ອນດຽວຢູ່ທີ່**@ www.adsa.dshs.wa.gov/professional/training/links**

ການກວດເບິ່ງເບື້ອງຫລັງ
- Background Check Authorization Form
- Fingerprint Appointment Form
- BCCU website

ການຝຶກຝົນ
- Find a Class/Instructor

ການຢັ້ງຢືນອອກໃບປະກາດ—**DOH**
- Main Website
- HCA Certification Application
- Provider Credential Search

•ການສອບເສັງເອົາຢັ້ງຢືນອອກໃບປະກາດ—**Prometric**
- Main Website
- HCA Test Infor-mation

Washington State Department of Social & Health Services
**ADSA** Aging & Disability Services Administration